ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------0000------

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ: 00008 /ຍທຂ

ນະຄອນຫລວງວຽງຈັນ, ວັນທີ : 2. ມັງກອນ. 2018

ຮຽນ: ທ່ານ ນາຍົກລັດຖະມົນຕີ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ເລື່ອງ: ຂໍອະນຸມັດໃຫ້ກະຊວງ ໂຍທາທິການ ແລະ ຂົນສົ່ງ ອອກຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງ ສະພາສະຖາປະນິກ ແລະ ວິສະວະກອນລາວ.

- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງ ໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 295/ຍທຂ, ລົງວັນທີ 04 ກັນຍາ 2017.
- ໜັງສືທາງລັດຖະການຈາກຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 761/ ຫສນຍ.ກນກ, ລົງວັນທີ 17/11/2017
- ອີງຕາມບົດປະກອບຄຳເຫັນຈາກ ກະຊວງ ພາຍໃນ ສະບັບເລກທີ 07/ພນ, ລົງວັນທີ 27/9/2017
- ອີງຕາມບົດບັນທຶກກອງປະຊຸມ ປຶກສາຫາລືກ່ຽວກັບການສ້າງຕັ້ງສະພາສະຖາປະນິກ ແລະ ວິສະວະກອນລາວ ຄັ້ງວັນທີ 5/12/2017 ແລະ ຄັ້ງວັນທີ 25/12/2017

ກະຊວງ ໂຍທາທິການ ແລະ ຂົນສົ່ງ ໃນນາມເປັນຄະນະຈຸດປະສານງານວຽກງານການຄ້າດ້ານບໍລິການອາຊີບ ຂໍຖືເປັນກຽດຢ່າງສູງຮຽນມາຍັງທ່ານຊາບກ່ຽວກັບຄວາມຄືບໜ້າ ຂອງການສະເໜີສ້າງຕັ້ງ ສະພາສະຖາປະນິກ ແລະ ວິສະວະກອນລາວ. ຜ່ານມາກະຊວງ ໂຍທາທິການ ແລະ ຂົນສົ່ງ ໄດ້ເຮັດໜັງສືສະເໜີຫາ ນາຍົກລັດຖະມົນຕີ ສະບັບເລກທີ 271/ຍທຂ, ລົງວັນທີ 23/3/2017, ມາຮອດປັດຈຸບັນ ກະຊວງ ໂຍທາທິການ ແລະ ຂົນສົ່ງ ໄດ້ຮັບຄຳຕອບຈາກຫ້ອງວ່າການສຳນັກງານນາຍົກ ລັດຖະມົນຕີ ແລະ ກະຊວງ ພາຍໃນ, ສັງລວມແລ້ວມີເນື້ອໃນໂດຍຫຍໍ້ດັ່ງນີ້:

1. ການສະເໜີສ້າງຕັ້ງມີເຫດຜົນ, ແຕ່ຄວນຄຳນຶງເຖິງ ກົງຈັກການຈັດຕັ້ງ ໃຫ້ກະທັດຮັດ ບໍ່ຄວນໃຫຍ່ຫລາຍ, ຄວນປັບປຸງພາລະບົດບາດ, ໜ້າທີ່, ຂອບເຂດສິດ ຂອງສະມາຄົມສະຖາປະນິກ ແລະ ວິສະວະກອນລາວ ທີ່ມີຢູ່ແລ້ວໃຫ້ຄົບຖ້ວນຕື່ມ
2. ຖ້າຫາກມີຄວາມຈຳເປັນໃນການສ້າງຕັ້ງ ແມ່ນສະເໜີໃຫ້ເປັນສະພາທີ່ປຶກສາ ດ້ານສະຖາປັດຕະຍະກຳ ແລະ ວິສະວະກຳ ລາວ ໃຫ້ແກ່ລັດຖະມົນຕີ ກະຊວງ ໂຍທາທິການ ແລະ ຂົນສົ່ງ ເພື່ອຮັບປະກັນການເປັນເສນາທິການດ້ານສະຖາປັດຕະຍະກຳ ແລະ ວິສະວະກຳ ຂອງລັດຖະມົນຕີແກ່ລັດຖະບານໃຫ້ມີປະສິດຕິພາບສູງ
3. ສະເໜີເປັນຂໍ້ຕົກລົງຂອງລັດຖະມົນຕີ ກະຊວງ ໂຍທາທິການ ແລະ ຂົນສົ່ງ ຈະເໝາະສົມກ່ວາ ເພາະບໍ່ແມ່ນສະພາຂອງລັດຖະບານ.

ຫລັງຈາກນັ້ນ ກະຊວງ ໂຍທາທິການ ແລະ ຂົນສົ່ງ ໄດ້ຈັດກອງປະຊຸມວິຊາການ ຄັ້ງວັນທີ 5 ທັນວາ 2017 ແລະ ວັນທີ 25 ທັນວາ 2017. ຜ່ານການຄົ້ນຄ້ວາກອງປະຊຸມໄດ້ຕົກລົງເຫັນດີເປັນເອກະພາບປັບປຸງຈາກຮ່າງດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງສະພາສະຖາປະນິກ ແລະ ວິສະວະກອນລາວ ມາເປັນຂໍ້ຕົກລົງຂອງລັດຖະມົນຕີກະຊວງ ໂຍທາທິການ ແລະ ຂົນສົ່ງ ວ່າດ້ວຍການສ້າງຕັ້ງສະພາສະຖາປະນິກ ແລະ ວິສະວະກອນລາວ ເພື່ອນຳສະເໜີລັດຖະບານ ອະນຸມັດໃຫ້ ກະຊວງ ໂຍທາທິການ ແລະ ຂົນສົ່ງ ອອກຂໍ້ຕົກລົງສ້າງຕັ້ງສະພາດັ່ງກ່າວ. ລາຍລະອຽດການປັບປຸງສາມາດສັງລວມຫຍໍ້, ລາຍລະອຽດການປັບປຸງສາມາດສັງລວມຫຍໍ້ ດັ່ງນີ້:

1. ປັບໂຄງສ້າງຈາກຮ່າງດຳລັດຂອງນາຍົກລັດຖະມົນຕີ ມາເປັນຂໍ້ຕົກລົງຂອງລັດຖະມົນຕີກະຊວງ ໂຍທາທິການ ແລະ ຂົນສົ່ງ;
2. ຮັກສາໂຄງປະກອບການຈັດຕັ້ງເຊັ່ນ: ສະພາສະຖາປະນິກ ແລະ ວິສະວະກອນ ລາວ, ຄະນະກຳມະການຕິດຕາມ ແລະ ກວດກາສະຖາປະນິກ, ຄະນະກຳມະການຕິດຕາມ ແລະ ກວດກາວິສະວະກອນ ແລະ ກອງເລຂາ
3. ຮັກສາສິດ, ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງສະພາສະຖາປະນິກ ແລະ ວິສະວະກອນລາວ
4. ກອງເລຂາມີທີ່ຕັ້ງຢູ່ ກົມແຜນການ ແລະ ການຮ່ວມມື (ພະແນກຮ່ວມມື ແລະ ຄຸ້ມຄອງການລົງທຶນ);
5. ນຳໃຊ້ງົບປະມານໃນການເຄື່ອນໄຫວວຽກງານຂອງກົມແຜນການ ແລະ ການຮ່ວມມື ແລະ ແຫຼ່ງລາຍຮັບອື່ນໆ.

ສະຫລຸບລວມແລ້ວ, ການສ້າງຕັ້ງສະພາສະຖາປະນິກ ແລະ ວິສະວະກອນລາວ ແມ່ນຄວາມຈຳເປັນພາວະວິໄສ ແລະ ເປັນພັນທະຂອງລັດຖະບານ ກໍຄືຂະແໜງການ ໂຍທາທິການ ແລະ ຂົນສົ່ງ ຕໍ່ອາຊຽນ ເພື່ອຊຸກຍູ້ສົ່ງເສີມວິຊາຊີບດ້ານສະຖາປະນິກ ແລະ ວິສະວະກຳ, ຊຶ່ງຜ່ານມາ ລັດຖະບານ ກໍໄດ້ມີແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຕາມຄຳເຫັນຂອງກະຊວງ ພາຍໃນ ເພື່ອໃຫ້ຄົ້ນຄ້ວາປັບປຸງຈາກຮ່າງດຳລັດຂອງນາຍົກລັດຖະມົນຕີ ມາເປັນຂໍ້ຕົກລົງຂອງລັດຖະມົນຕີ ກະຊວງ ໂຍທາທິການ ແລະ ຂົນສົ່ງ ວ່າດ້ວຍການສ້າງຕັ້ງສະພາສະຖາປະນິກ ແລະ ວິສະວະກອນລາວ ໂດຍເຫັນວ່າມີເຫດຜົນແທ້ ແລະ ແທດເໝາະກັບສະພາບຕົວຈິງ ແລະ ກະຊວງ ໂຍທາທິການ ແລະ ຂົນສົ່ງ ກໍໄດ້ເປັນເຈົ້າການປັບປຸງຄືນໃໝ່. ມາຮອດເວລານີ້, ຜ່ານການຄົ້ນຄ້ວາເປັນເວລາຍາວນານຫຼາຍປີ ແລະ ຫຼາຍຫຼັບຫຼາຍຕ່າວ, ກະຊວງ ໂຍທາທິການ ແລະ ຂົນສົ່ງ ຈຶ່ງຮຽນສະເໜີມາຍັງທ່ານ ອະນຸມັດໃຫ້ ກະຊວງ ໂຍທາທິການ ແລະ ຂົນສົ່ງ ອອກຂໍ້ຕົກລົງສະບັບນີ້ ເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ເລີ່ມຕົ້ນຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳເທື່ອລະກ້າວ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

ລັດຖະມົນຕີ

ກະຊວງໂຍທາທິການ ແລະ ຂົນສົ່ງ ລັດຖະມົນຕີ

ດຣ ບຸນຈັນ ສິນທະວົງ